ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2339 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 09 ພະຈິກ 2012

# ຂໍ້ຕົກລົງ

## ກ່ຽວກັບຄະນະປະສານງານບໍລິການປະຕູດຽວ ສຳລັບການຂຶ້ນທະບຽນວິສາຫະກິດ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 9 ພະຈິກ 2005;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ເລກທີ 02/ສພຊ, ລົງວັນທີ 8/7/ 2009;
- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 188/ນຍ, ລົງວັນທີ 17 ສິງຫາ 2006 ;
- ອີງຕາມຂໍ້ຕົກລົງແຕ່ງຕັ້ງພະນັກງານຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອປະກອບເຂົ້າໃນຄະນະປະສານງານບໍລິການປະຕູດຽວ

ລັດຖະມົນຕີວ່າການກະຊວງ ອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ :

**ມາດຕາ 1. ຄະນະປະສານງານບໍລິການປະຕູດຽວ**

ຄະນະປະສານງານບໍລິການປະຕູດຽວ ສຳລັບການຂຶ້ນທະບຽນວິສາຫະກິດ ປະກອບດ້ວຍ:

- ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ;
- ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເປັນຮອງປະທານ ທັງເປັນຫົວໜ້າກອງເລຂາ;
- ຜູ້ຕາງໜ້າຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເປັນຄະນະ.

ຄະນະປະສານງານບໍລິການປະຕູດຽວ ມີທີ່ຕັ້ງສຳນັກງານຢູ່ກະຊວງອຸດສາຫະກຳ ແລະ ການຄ້າ.

ຄະນະປະສານງານບໍລິການປະຕູດຽວມີ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເປັນກອງເລຂາຊ່ວຍວຽກ.

**ມາດຕາ 2. ຮັບຮອງລາຍຊື່ຄະນະປະສານງານບໍລິການປະຕູດຽວ**

ຮັບຮອງລາຍຊື່ພະນັກງານທີ່ຖືກແຕ່ງຕັ້ງຈາກຂະແໜງການທີ່ກ່ຽວຂ້ອງ ປະກອບເຂົ້າໃນຄະນະປະສານງານບໍລິການປະຕູດຽວ(ຂັ້ນສູນກາງ) ສຳລັບການຂຶ້ນທະບຽນວິສາຫະກິດ ດັ່ງນີ້ :

1. ກະຊວງປ້ອງກັນປະເທດ :

ທ່ານ ທອງລີ ສີສຸລິດ ຫົວໜ້າຂະແໜງ, ກົມເສດຖະກິດ;

2. ກະຊວງປ້ອງກັນຄວາມສະຫງົບ :

ທ່ານ ສຸບທອນ ເມືອງເໜືອ ຫົວໜ້າພະແນກ, ກົມໃຫຍ່ສັນຕິບານ(106);

3. ກະຊວງການຕ່າງປະເທດ :

ທ່ານ ຄຳຟອງ ໄຊຍະລາດ ວິຊາການ, ກົມເສດຖະກິດ ກະຊວງການຕ່າງປະເທດ ;

4. ກະຊວງຍຸຕິທຳ :

ທ່ານ ນ. ລົດຈະນາ ເຂັມທອງ ຫົວໜ້າພະແນກບໍລິຫານ, ກົມຄຸ້ມຄອງລະບົບຍຸຕິທໍາ;

5. ກະຊວງ ສຶກສາທິການ ແລະ ກິລາ :

ທ່ານ ສີໄນ ພັບບຸດສີ ວິຊາການ , ກົມແຜນການ ແລະ ການຮ່ວມມື;

6. ກະຊວງ ສາທາລະນາສຸກ :

ທ່ານ ນ. ສົມໝາຍ ໝູນສຸລິສັກ ວິຊາການ , ພະແນກຄົ້ນຄ້ວາສັງລວມ,ຫ້ອງການກະຊວງ;

7. ກະຊວງ ຖະແຫຼງຂ່າວ-ວັດທະນາທໍາ ແລະ ທ່ອງທ່ຽວ :

ທ່ານ ນ. ບຸນຍົງ ພົມດວງດີ ຫົວໜ້າພະແນກແຜນການ, ກົມແຜນການ ແລະ ການເງິນ;

8. ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ :

ທ່ານ ນ. ຂັນທະລາ ຫລວງລາດ ຮອງຫົວໜ້າພະແນກນະໂຍບາຍ ແລະ ວາງແຜນ, ກົມພັດທະນາຝີມືແຮງງານ ແລະ ຈັດຫາງານ.

9. ກະຊວງການເງິນ :

ທ່ານ ນ. ວຽງຄອນ ຈິນດາວົງ ຫົວໜ້າໜ່ວຍງານ, ກົມສ່ວຍສາອາກອນ;

10. ກະຊວງ ກະສິກໍາ ແລະ ປ່າໄມ້ :

ທ່ານ ສຸດໃຈ ທຸຍຍອານິດຊະວົງ ;

11. ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ :

ທ່ານ ຄໍາມີ ທິບພະໄຊ ວິຊາການ, ກອງປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

12. ກະຊວງ ພະລັງງານ ແລະ ບໍ່ແຮ່ :

ທ່ານ ໂກສົ່ງ ໄພທິສອດ ວິຊາການ , ພະແນກສົ່ງເສີມ ແລະ ຮ່ວມມື, ຫ້ອງການກະຊວງ,

13. ກະຊວງອຸດສາຫະກໍາ ແລະ ການຄ້າ 2 ທ່ານ :

- ທ່ານ ພູທອນ ບຸນທະວົງຄໍາ ຮອງຫົວໜ້າພະແນກຄຸ້ມຄອງ ແລະ ສົ່ງເສີມອຸດສາຫະກໍາ , ກົມອຸດສາຫະກໍາ;
- ທ່ານ ນ. ດວງພະຈັນ ກ້ອນມີໄຊ, ຮອງຫົວໜ້າພະແນກ, ກົມການນໍາເຂົ້າແລະສົ່ງອອກ.

14. ກະຊວງ ໂຍທາທິການ ແລະ ຂົນສົ່ງ :

ທ່ານ ແສງສະຫວ່າງ ພັນດານຸວົງ ວິຊາການ, ຫ້ອງການກອງເລຂາຄະນະກໍາມະການຂົນສົ່ງແຫ່ງຊາດ , ກົມຂົນສົ່ງ.

15. ກະຊວງວິທະຍາສາດ ແລະ ເທັກໂນໂລຊີ :

ທ່ານ ບົວວອນ ສີນຸທາດີ ຫົວໜ້າພະແນກມາດຕະຖານ ແລະ ຄຸນນະພາບ

16. ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ :

ທ່ານ ສົມຈິດ ອານຸວົງ ຮອງຫົວໜ້າພະແນກບໍລິຫານ,ຮ່ວມມື ແລະ ນິຕິກໍາ, ກົມແຜນການ, ການເງິນ ແລະ ຮ່ວມມື.

17. ທະນາຄານ ແຫ່ງ ສປປ ລາວ :

ທ່ານ ວິສອນ ໄຊສົງຄາມ ຫົວໜ້າພະແນກ ເສດຖະກິດ, ກົມນະໂຍບາຍເງິນຕາ ;

18. ກະຊວງແຜນການ ແລະ ການລົງທຶນ :

ທ່ານ ດຣ ພອນໄຊ ວິໄລສັກ ຮອງຫົວໜ້າພະແນກບໍລິຫານ, ກົມສົ່ງເສີມການລົງທຶນ.

ມາດຕາ 3. ສິດແລະໜ້າທີ່ ຂອງຄະນະປະສານງານ

ຄະນະປະສານງານບໍລິການປະຕູດຽວ ມີສິດ ແລະ ໜ້າທີ່ ດັ່ງນີ້ :

- ຄົ້ນຄ້ວາ, ພິຈາລະນາ ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃນທຸລະກິດທີ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ຊຶ່ງຂະແໜງການກ່ຽວຂ້ອງ ຍັງມີຄຳເຫັນບໍ່ເປັນເອກະພາບ ຫລື ຍັງມີບັນຫາທີ່ຕ້ອງໄດ້ຄົ້ນຄ້ວາຕົກລົງເປັນເອກະພາບກັນ;

- ເປີດກອງປະຊຸມ ເພື່ອຕົກລົງບັນຫາຕ່າງໆຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນລະບຽບ ກົດໝາຍ; ຄຳເຫັນຜູ້ຕາງໜ້າຂອງຂະແໜງການທີ່ກ່ຽວຂ້ອງ ນຳມາສະເໜີຕໍ່ກອງປະຊຸມ ຄະນະປະສານງານຕ້ອງແມ່ນຄຳເຫັນທີ່ໄດ້ຮັບການເຫັນດີເປັນເອກະພາບ ຈາກຄະນະນຳຂອງ ຂະແໜງການຕົນ.

ມາດຕາ 4. ສິດ ແລະ ໜ້າທີ່ ຂອງກອງເລຂາ

ສິດ ແລະ ໜ້າທີ່ ຂອງກອງເລຂາ ມີດັ່ງນີ້ :

- ຮັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ;

- ຄົ້ນຄ້ວາ, ພິຈາລະນາຂື້ນທະບຽນວິສາຫະກິດ ໃຫ້ຜູ້ລົງທຶນ, ຖ້າເປັນທຸລະກິດທີ່ບໍ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ;

- ນຳສົ່ງເອກະສານ ຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ຜູ້ຕາງໜ້າຂອງຂະແໜງການ ທີ່ປະກອບ ຢູ່ໃນຄະນະປະສານງານບໍລິການປະຕູດຽວ ຕາມທີ່ໄດ້ບົ່ງໄວ້ໃນມາດຕາສອງ ຂອງຂໍ້ຕົກລົງສະບັບນີ້ ເພື່ອສະເໜີຂັ້ນເທິງຂອງຕົນພິຈາລະນາ, ຖ້າເປັນທຸລະກິດທີ່ນອນຢູ່ໃນບັນຊີປະເພດທຸລະກິດຄວບຄຸມ ;

- ທວງເອົາຄຳຕອບຈາກຂະແໜງການທີ່ກ່ຽວຂ້ອງ ຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນລະບຽບ ກົດໝາຍທີ່ກ່ຽວຂ້ອງ, ໃນກໍລະນີກາຍເວລາທີ່ກຳນົດໄວ້ ຖືວ່າຂະແໜງການດັ່ງກ່າວເຫັນດີ ;

- ສັງລວມຄຳເຫັນທີ່ຍັງບໍ່ທັນເປັນເອກະພາບ ຫລື ຍັງມີບັນຫາທີ່ຈະຕ້ອງໄດ້ຄົ້ນຄ້ວາຕົກລົງເປັນເອກະພາບກັນ ເພື່ອສະເໜີເປີດກອງປະຊຸມຂອງຄະນະປະສານງານ ;

- ຈັດອາລະ ແລະ ບັນທຶກກອງປະຊຸມ ຂອງຄະນະປະສານງານ;

- ແຈ້ງຜົນຂອງກອງປະຊຸມຄະນະປະສານງານແຕ່ລະຄັ້ງ ໃຫ້ຜູ້ຕາງໜ້າ ຂອງຂະແໜງການ ທີ່ເຂົ້າຮ່ວມກອງປະຊຸມໄດ້ຮັບຊາບ.

ມາດຕາ 5. ສິດ ແລະ ໜ້າທີ່ ຂອງຜູ້ຕາງໜ້າຂະແໜງການທີ່ກ່ຽວຂ້ອງ

ຜູ້ຕາງໜ້າຂອງຂະແໜງການທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ພາຍຫຼັງໄດ້ຮັບເອກະສານນຳສົ່ງກ່ຽວກັບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ໃຫ້ປະສານກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນຂະແໜງການຂອງຕົນ ເພື່ອຄົ້ນຄ້ວາ ແລະ ສະເໜີຂັ້ນເທິງຕົກລົງ ແລ້ວແຈ້ງຕອບເປັນລາຍລັກອັກສອນໃຫ້ ກອງເລຂາ ຕາມກຳນົດເວລາ ທີ່ໄດ້ບົ່ງໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ;

- ເຂົ້າຮ່ວມກອງປະຊຸມຄະນະປະສານງານ ຢ່າງເປັນປົກກະຕິ, ໃນກໍລະນີຈຳເປັນບໍ່ສາມາດ ເຂົ້າຮ່ວມໄດ້ ຕ້ອງມອບໃຫ້ຜູ້ຕາງໜ້າທີ່ກຳບັນຫາໄດ້ ເຂົ້າມາຮ່ວມກອງປະຊຸມແທນ ;

- ລາຍງານຜົນການເຂົ້າຮ່ວມກອງປະຊຸມ ໃຫ້ຄະນະນຳຂອງຂະແໜງການຕົນຮັບຊາບ.

ມາດຕາ 6. ການຈັດຕັ້ງປະຕິບັດ

ມອບໃຫ້ທ່ານທີ່ຖືກແຕ່ງຕັ້ງ, ຂະແໜງການທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ. 7. ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ, ເລກທີ 1631/ອຄ.ຄພນ, ລົງວັນທີ 25 ສິງຫາ 2011 ແລະ ຂໍ້ຕົກລົງເພີ່ມເຕີມ, ເລກທີ 2424 /ອຄ.ຄພນ, ລົງວັນທີ 23 ທັນວາ 2011, ກ່ຽວກັບຄະນະປະສານງານບໍລິການປະຕູດຽວສຳລັບການສົ່ງເສີມການລົງທຶນໃນກິດຈະການທົ່ວໄປ. ✓

ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ